## ເຄັດລັບການພັດທະນາຕົວເມືອງ

ໃນຫົວຂໍ້ຕໍ່ໄປນີ້ ແມ່ນຈະກ່ຽວຂ້ອງກັບຂໍ້ມູນ ກົດໝາຍ ແລະ ເຄື່ອງມືໃນການພັດທະນາຕົວເມືອງ ພ້ອມທັງແນວຄິດລິເລີ່ມການພັດທະນາຕົວເມືອງ.
ຫົວຂໍ້ **ກ່ຽວກັບ ການອະນຸຍາດການປຸກສ້າງ.**

## ເພື່ອສ້າງເມືອງທີ່ປອດໄພ ແລະ ສວຍງາມ

ການອະນຸຍາດການປຸກສ້າງ ແມ່ນກົດລະບຽບຂັ້ນພື້ນຖານທີ່ສະກັດກັ້ນການປຸກສ້າງອາຄານທີ່ບໍ່ສອດຄ່ອງກັບລະບຽບ ແລະ ກົດໝາຍ ພ້ອມທັງຊ່ວຍຮັກສາ ແລະ ສ້າງຕົວເມືອງທີ່ປອດໄພ ແລະ ສວຍງາມ. ເມື່ອທ່ານຕ້ອງການປຸກສ້າງອາຄານ ຫຼື ໂຄງສ້າງໃຫມ່, ຕໍ່ເຕີມ ຫຼື ສ້ອມແປງອາຄານ, ທ່ານຕ້ອງຍື່ນເອກະສານທີ່ຈຳເປັນຕໍ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ (ຍທຂ, ນວ) ຫຼື ຫ້ອງການ ຍທຂ ເມືອງ ເພື່ອຂໍອະນຸຍາດປຸກສ້າງກ່ອນທີ່ທ່ານ ຈະລົງມືກໍ່ສ້າງ. ເມື່ອໄດ້ຮັບໃບອະນຸຍາດປຸກສ້າງແລ້ວ ທ່ານສາມາດເລີ່ມການກໍ່ສ້າງໄດ້. ຂັ້ນຕອນດັ່ງກ່າວ ແມ່ນອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການປູກສ້າງ ສະບັບປັບປຸງ ປີ 2019.

### ◆ ເມື່ອໃດ?

ການຍື່ນເອກະສານຂໍອະຍຸຍາດປຸກສ້າງ ຕ້ອງຍື່ນກ່ອນການເລີ່ມການກໍ່ສ້າງ ເຊິ່ງລັກສະນະການຂໍອະນຸຍາດປຸກສ້າງມີດັ່ງນີ້:

1. ການສ້າງ (ອາຄານ) ແລະ ຕິດຕັ້ງໂຄງສ້າງຕ່າງໆ
2. ການຕໍ່ເຕີມ ແລະ ປ່ຽນແປງເປົ້າໝາຍການນຳໃຊ້
3. ການບູລະນະ ແລະ ປະຕິສັງຂອນ
4. ການທັບມ້າງ - ສ້ອມແປງອາຄານ ຫຼື ສິ່ງປຸກສ້າງ




### ◆ ບ່ອນໃດ?

ການຍື່ນເອກະສານ ຫຼື ຂໍຄຳແນະນຳ ແມ່ນຢູ່ປ່ອງບໍລິການປະຕູດຽວຂອງຂະແໜງ ຍທຂ ທີ່ຕອນດິນປຸກສ້າງຕັ້ງຢູ່ ເຊິ່ງມີລັກສະນະ ແລະ ລະດັບຂອງການອະນຸຍາດປຸກສ້າງດັ່ງນີ້:

| ສະຖານທີ່ຍື່ນເອກະສານ | ປະເພດ |
|---|---|
| ລະດັບ1 **ພະແນກ ຍທຂ, ນວ** | ສິ່ງປຸກສ້າງຂະໜາດ ໃຫຍ່<br>ມີເນື້ອທີ່ແຕ່ 10 000 ຕາແມັດຂຶ້ນໄປ, ຄວາມສູງ ເກີນ 20 ແມັດ |
| ລະດັບ2 **ພະແນກ ຍທຂ, ນວ** | ສິ່ງປຸກສ້າງຂະໜາດ ກາງ<br>ມີເນື້ອທີ່ ແຕ່ 400 ຫາ 10 000 ຕາແມັດ<br>ຄວາມສູງ 10-20 ແມັດ |
| ລະດັບ3 **ຫ້ອງການ ຍທຂ ເມືອງ** | ສິ່ງປຸກສ້າງຂະໜາດ ນ້ອຍ<br>ມີເນື້ອທີ່ ບໍ່ເກີນ 400 ຕາແມັດ, ຄວາມສູງບໍ່ເກີນ 10 ແມັດ |

### ◆ ເປັນຫຍັງ?

ເອກກະສານຂໍອະນຸຍາດການປຸກສ້າງ ແມ່ນຈະຖືກກວດສອບວ່າສິ່ງປຸກສ້າງ ຫຼື ໂຄງສ້າງຕ່າງໆແມ່ນຖືກຕ້ອງ ແລະ ສອດຄ່ອງກັບແຜນຜັງເມືອງ (ການນຳໃຊ້, ຄວາມສູງ, ແລະອື່ນໆ) ຫຼື ບໍ່. ເພື່ອໃຫ້ພົນລະເມືອງດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ປອດໄພ ແລະ ສະດວກສະບາຍຈຳເປັນຕ້ອງໄດ້ຄຳນຶງເຖິງຫຼາຍປັດໃຈ ເຊັ່ນ: ຄວາມດຸ່ນດ່ຽງດ້ານການພັດທະນາ, ສະພາບພື້ນຖານໂຄງລ່າງ ເຊັ່ນ: ຖະໜົນຫົນທາງ, ນໍ້າປະປາ, ແລະ ເຂດສີຂຽວ

ຕິດຕໍ່ພົວພັນ: ພະແນກ ຍທຂ, ນວ ໂທ: 021 260 206
ແບບຟອມ : https://vientianecity.gov.la

ທ່ານສາມາດອ່ານສະບັບເອເລັກໂຕຣນິກໄດ້ ທີ່ນີ້ →

ດັດແກ້ ແລະ ຈັດພິມໂດຍ : ກອງເລຂາການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ(UMP) ump.secretariat.laos@gmail.com

UMP NEWSLETTER

# ບ້ານເຮົາ

ຕີພິມຄັ້ງທີ1 ໃນເດືອນ ກຸມພາ 2022

## 'ບ້ານເຮົາ' ແມ່ນຫຍັງ?

ບ້ານເຮົາ ແມ່ນຈົດໝາຍຂ່າວ ທີ່ສະໜອງຂໍ້ມູນກ່ຽວກັບ ການພັດທະນາຕົວເມືອງ ໃນນະຄອນຫຼວງວຽງຈັນ ແລະ ຫົວຂໍ້ອື່ນໆທີ່ກ່ຽວຂ້ອງ. ນອກນັ້ນ, ຈົດໝາຍຂ່າວບໍ່ພຽງແຕ່ຕີພິມຂ່າວສານສຳລັບຜູ້ປະກອບອາຊີບໃນຂະແໜງສະຖາປັດຕະຍະກຳ ແລະ ການວາງແຜນຜັງເມືອງເທົ່ານັ້ນ ຫາກຍັງເປັນຂໍ້ມູນຂ່າວສານສຳລັບຜູ້ທີ່ມີຄວາມສົນໃຈໃນການພັດທະນາຕົວເມືອງອີກດ້ວຍ



New Year Patuxay Photo by Yama

## News ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ແມ່ນການເປີດການເຊື່ອມຕໍ່ຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆໃນການພັດທະນາຕົວເມືອງ

ການຈັດຕັ້ງກົນໄກການປະສານງານ ເພື່ອຄຸ້ມຄອງຕົວເມືອງມີຈຸດປະສົງເພື່ອແນໃສ່ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນທາງດ້ານນະໂຍບາຍ ແລະ ບັນຫາກ່ຽວກັບການພັດທະນາຕົວເມືອງລວມທັງພາກລັດ, ເອກະຊົນ, ປະຊາຊົນ ແລະ ຜູ້ທີ່ມີສ່ວນຮ່ວມ. ນອກນັ້ນ, ຍັງມີການຈັດຕັ້ງກອງປະຊຸມສຳມະນາ, ແລກປ່ຽນຂໍ້ມູນຂ່າວສານ ແລະ ເຕັກໂນໂລຢີ (ICT). ການສ້າງຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ ແມ່ນຢູ່ພາຍໃຕ້ກອບຂອງໂຄງການສ້າງຂີດຄວາມສາມາດໃນການສົ່ງເສີມ ແລະ ຄຸ້ມຄອງການພັດທະນາຕົວເມືອງທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການໄຈກ້າ, ພາຍໃຕ້ການຊີ້ນຳຂອງກະຊວງໂຍທາທິການ ແລະ ຂົນສົ່ງເຊິ່ງຈັດຕັ້ງປະຕິບັດໂດຍກຸ່ມເຮັດວຽກຂອງໂຄງການໂດຍມີການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງຕ່າງໆ ລວມທັງຫ້ອງການປົກຄອງນະຄອນຫຼວງວຽງຈັນ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ. ກອງປະຊຸມການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງຄັ້ງທຳອິດໄດ້ຈັດຂຶ້ນໃນວັນທີ 2 ກຸມພາ 2022 ເຊິ່ງ ໃນອານາຄົດຈະມີການຈັດສຳມະນາແບບເປີດກ້ວາງເຊິ່ງຈະໄດ້ເຊື້ອເຊີນເອົາພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າມາຮ່ວມນຳຕື່ມ.



ກອງປະຊຸມ ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ ຄັ້ງທີ່ 1

## ສໍາພາ

ທ່ານ ຮສ ປອ. ອະພິໄຊຍະເດດ ອິນສີຊຽງໃໝ່, ຮອງຫົວໜ້າສະຖາບັນຄົ້ນຄວ້າ ຍທຂ ແລະ ທ່ານ ນະລິງໄຊ ມີວາປະດິດ,ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ ແມ່ນຖືກ ຮຽນເຊີນມາສົນທະນາກ່ຽວກັບສະພາບການພັດທະນາຕົວເມືອງໃນນະຄອນຫຼວງວຽງຈັນ



ທ່ານ ຮສ ປອ. ອະພິໄຊຍະເດດ ອິນສີຊຽງໃໝ່
ຮອງຫົວໜ້າສະຖາບັນຄົ້ນຄວ້າ ຍທຂ

ທ່ານ ນະລິງໄຊ ມີວາປະດິດ
ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ



◇ ນະຄອນຫຼວງວຽງຈັນເປັນເມືອງຫຼວງ ສີຂຽວທີ່ສວຍສົດງົດງາມ ໃນທັດສະນະ ຂອງທ່ານແລ້ວທ່ານເຫັນການພັດທະນາຕົວເມືອງໃນປັດຈຸບັນແນວໃດ?

**ທ່ານ ຮສ ປອ. ອະພິໄຊຍະເດດ ອິນສີຊຽງໃໝ່:**

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາ ເປັນ ສປປ ລາວ, ນະຄອນຫຼວງວຽງຈັນໄດ້ຮັບການພັດທະນາຢ່າງຮອບດ້ານ ແລະ ນັບມື້ນັບເຂັ້ມແຂງ, ເຕີບໃຫຍ່ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ; ຕົວເມືອງ ແລະ ຊານເມືອງໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງວ່ອງໄວ, ໂສມໜ້າໃໝ່ຂອງຕົວເມືອງ ນັບມື້ນັບເດັ່ນຊັດ.

ເຖິງຢ່າງໃດກໍຕາມ ເມື່ອທຽບກັບລະດັບການພັດທະນາຂອງບັນດານະຄອນຫຼວງຂອງຫຼາຍປະເທດ, ເຫັນວ່ານະຄອນຫຼວງວຽງຈັນ ຍັງເປັນນະຄອນຫຼວງ "ດ້ອຍພັດທະນາ" ເປັນຕົ້ນມີໜີ້ສິນສາທາລະນະສູງ, ພື້ນຖານໂຄງລ່າງຄົມມະນາຄົມຂອງຕົວເມືອງກໍຄື ກິດຈະການສາທາລະນະປະໂຫຍດບໍ່ທັນຕອບສະໜອງກັບຄວາມຕ້ອງການ, ການບໍລິຫານຈັດການຕົວເມືອງບໍ່ເຂັ້ມແຂງ, ການຄຸ້ມຄອງຜັງເມືອງບໍ່ເຂັ້ມງວດ, ການປຸກສ້າງເຄຫາສະຖານບໍ່ທັນເປັນໄປຕາມແຜນຜັງ ແລະ ບໍ່ຮັບປະກັນຄວາມກົມກຽວລະຫວ່າງເອກະລັກດ້ານສະຖາປັດຕະຍະກໍາຂອງຊາດກັບຂອງຍຸກສະໄໝ.

◇ ການພັດທະນາຕົວເມືອງແມ່ນມີຫຼາຍຮູບແບບທີ່ແຕກຕ່າງກັນ ຈາກໂຄງການຂະໜາດໃຫຍ່ ຫາ ທີ່ຢູ່ອາໄສຂະໜາດນ້ອຍ ແລະ ກິດຈະກໍາອື່ນໆ, ທ່ານຄິດວ່າການພັດທະນາດັ່ງກ່າວຄວນຈະຖືກຄວບຄຸມ ແລະ ສົ່ງເສີມແນວໃດ?

**ທ່ານ ນະລິງໄຊ ມີວາປະດິດ:**

ໃນປັດຈຸບັນປະເທດລາວ ແມ່ນມີບັນດາໂຄງການເກີດຂຶ້ນຢ່າງຫຼວງຫຼາຍ ບໍ່ວ່າຈະເປັນໂຄງການຂະໜາດໃຫຍ່ ຫາ ທີ່ຢູ່ອາໄສຂະໜາດນ້ອຍ ແລະ ເປັນອົງປະກອບໜຶ່ງຂອງການພັດທະນາຕົວເມືອງ, ເຊິ່ງການພັດທະນາດັ່ງກ່າວ ຄວນຈະຖືກຄວບຄຸມໃຫ້ເປັນໄປຕາມແຜນຍຸດທະສາດການພັດທະນາຕົວເມືອງຂອງແຜນຜັງຕົວເມືອງ, ລະບຽບການຜັງເມືອງ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ; ທັງນີ້ກໍ່ເພື່ອເຮັດໃຫ້ການພັດທະນາຕົວເມືອງໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທໍາ, ປະຫວັດສາດ, ເອກະລັກທາງດ້ານສະຖາປັດຕະຍະກໍາ, ສິລະປະກໍາ ແລະ ພູມີທັດຂອງຕົວເມືອໃຫ້ມີຄວາມສວຍງາມ ແລະ ຍືນຍົງ.

ສໍາລັບການສົ່ງເສີມ ແມ່ນເນັ້ນໜັກສົ່ງເສີມບັນດາໂຄງການພັດທະນາ ທີ່ມີຄວາມສົມສ່ວນກົມກຽວ ລະຫວ່າງໂຄງປະກອບເສດຖະກິດພາຍໃນ ທີ່ມີຜົນປະໂຫຍດຕໍ່ປະເທດຊາດ ແລະ ປະຊາຊົນ, ໂດຍມີການບໍລິການທັນສະໄໝ, ອຸດສະຫະກໍາສະອາດ ແລະ ກະສິກໍາສີຂຽວ ເພື່ອໃຫ້ກາຍເປັນຕົວເມືອທັນສະໄໝ ແລະ ມີມາດຖານຕົວເມືອງທັນສະໄໝແຕ່ຫົວທີ, ຮັບປະກັນຜົນປະໂຫຍດເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ໂດຍສະເພາະ ແມ່ນບັນດາໂຄງການພັດທະນາຕົວເມືອງ ທີ່ປະກອບສ່ວນຊຸກຍູ້ການຈະເລີນເຕີບໂຕຂອງເສດຖະກິດ, ການສ້າງວຽກເຮັດງານທໍາ ທີ່ສ້າງລາຍຮັບໃຫ້ແກ່ປະຊາຊົນ, ສ້າງຕົວເມືອງໃຫ້ເປັນຕົວເມືອງທີ່ໜ້າຢູ່ ແລະ ທັນສະໄໝ.

◇ ໃນອານາຄົດ ທ່ານຢາກເຫັນ ການພັດທະນາຕົວເມືອງນະຄອນວຽງຈັນ ໃນຮູບແບບໃດ?

**ທ່ານ ຮສ ປອ. ອະພິໄຊຍະເດດ ອິນສີຊຽງໃໝ່:**

ຫັນເປັນຕົວເມືອງ ດ້ວຍການສ້າງເຂດພັດທະນາໃໝ່ ໃຫ້ກາຍເປັນເຂດຕົວເມືອງໃໝ່ທີ່ທັນສະໄໝ ແລະ ມີມາດຕະຖານຂອງຕົວເມືອງອັດສະລິຍະ ( Smart City ) ແຕ່ຫົວທີ; ປັບປຸງຍົກລະດັບຊຸມຊົນຕົວເມືອງເກົ່າ ທີ່ຍັງເປັນເຄິ່ງຕົວເມືອງ - ເຄິ່ງຊົນນະບົດ, ຍົກລະດັບການພັດທະນາໃນເຂດເທດສະບານຂອງເມືອງຕ່າງໆ, ສ້າງບ້ານໃນເຂດຊານເມືອງໃຫ້ເປັນເຂດຊຸມຊົນຕົວເມືອງນ້ອຍທີ່ໜ້າຢູ່, ຈັດຕັ້ງປະຕິບັດແຜນຜັງລວມຕົວເມືອງວຽງຈັນສະບັບທີ III ໄລຍະຮອດປີ 2030.

◇ ພາກສ່ວນ ພົນລະເມືອງ ແລະ ເອກະຊົນ ຕ່າງກໍ່ມີບົດບາດ ໃນການພັດທະນາຕົວເມືອງ, ພວກເຂົາມີພາລະບົດບາດອັນໃດແດ່ໃນການພັດທະນາຕົວເມືອງ?

**ທ່ານ ນະລິງໄຊ ມີວາປະດິດ:**

ຢູ່ໃນການພັດທະນາຕົວເມືອງໃດໜຶ່ງ ແນ່ນອນວ່າຕ້ອງປະກອບດ້ວຍການມີສ່ວນຮ່ວມຂອງພາກເອກະຊົນ ແລະ ພົນລະເມືອງ ທີ່ອາໄສຢູ່ໃນຕົວເມືອງນັ້ນໆ ເຊິ່ງລັດ, ເອກະຊົນ ແລະ ປະຊາຊົນເປັນຜູ້ວາງແຜນພັດທະນາຮ່ວມກັນ, ເອກະຊົນເປັນຜູ້ຈັດຕັ້ງປະຕິບັດ ຫຼື ລົງທຶນເປັນແຕ່ລະໂຄງການບູລິມະສິດ ແລະ ປະຊາຊົນເປັນຜູ້ໃຫ້ຄວາມຮ່ວມມື. ການພັດທະນາຕົວເມືອງແມ່ນເປັນວຽກງານທີ່ສໍາຄັນອີກຢ່າງໜຶ່ງໃນການສ້າງສາພັດທະນາປະເທດຊາດ, ການພັດທະນາດັ່ງກ່າວຕ້ອງເລີ່ມຈາກຈຸດນ້ອຍໆກ່ອນກໍ່ຄື "ຊຸມຊົນ", ເຊິ່ງການມີສ່ວນຮ່ວມໃນການພັດທະນາ ແມ່ນການເຮັດວຽກຮ່ວມກັນ ເພື່ອໃຫ້ທຸກຄົນມີສ່ວນຮ່ວມໃນການຕັດສິນໃຈໃນກິດຈະກໍາຕ່າງໆ ທີ່ຈະສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງທຸກຄົນໄດ້, ການມີສ່ວນຮ່ວມໃນຊຸມຊົນເປັນການພັດທະນາ ແລະ ພາໃຫ້ເກີດການພົວພັນໃນການເຮັດວຽກ ລະຫວ່າງພາກລັດ, ເອກະຊົນ ແລະ ປະຊາຊົນ ເພື່ອການພັດທະນາໂຄງການດັ່ງກ່າວໃຫ້ມີຄວາມຍືນຍົງ.

◇ ທ່ານທັງສອງເຮັດໜ້າທີ່ເປັນປະທານ ຂອງການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ (UMP), ກິດຈະກໍາປະເພດໃດແດ່ທີ່ຕ້ອງການຢາກຈະປະຕິບັດໃນອານາຄົດ?

**ທ່ານ ຮສ ປອ. ອະພິໄຊຍະເດດ ອິນສີຊຽງໃໝ່:**

ພັດທະນານະຄອນຫຼວງວຽງຈັນໃຫ້ເປັນເມືອງໜ້າຢູ່ໃຫ້ໄວຂຶ້ນ, ຍືນຍົງ ແລະ ອັດສະລິຍະໃຫ້ໄວຂຶ້ນ, ຈັດຕັ້ງປະຕິບັດ ແຜນຜັງລວມຕົວເມືອງວຽງຈັນສະບັບທີ III ແລະ ແຜນຜັງສະເພາະຂອງແຕ່ລະເຂດ, ແຕ່ລະຖະໜົນໃຫ້ເປັນຮູບປະທໍາ, ສຸມໃສ່ເຂດໃຈກາງໃຫ້ມີຄວາມໂດດເດັ່ນ, ຊັບຊ້ອນຄືນໃໝ່ຂອງພູມສັນຖານຂອງບ້ານທີ່ສັງກັດໃນເມືອງຕ່າງໆໃຫ້ເໝາະສົມ.

**ທ່ານ ນະລິງໄຊ ມີວາປະດິດ:**

ກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ໃນອະນາຄົດ ແມ່ນຢາກໃຫ້ເນັ້ນໃສ່ການປະສານສົມທົບກັນ ລະຫວ່າງ ສູນກາງກັບທ້ອງຖິ່ນໃນການຈັດຕັ້ງປະຕິບັດໂຄງການເປັນແຕ່ລະໄລຍະເພື່ອຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ເພື່ອເປັນບ່ອນອີງໃນການວາງແຜນການພັດທະນາ ແລະ ຄຸ້ມຄອງຕົວເມືອງ, ມີການແລກປ່ຽນຄໍາຄິດ ຄໍາເຫັນ ກ່ຽວກັບບັນຫາການຄຸ້ມຄອງຕົວເມືອງກັບອົງການປົກຄອງທ້ອຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ມີການເຜີຍແຜ່ ຂໍ້ມູນກ່ຽວກັບການພັດທະນາ ແລະ ຄຸ້ມຄອງຕົວເມືອງ, ວິທີການແກ້ໄຂບັນຫາຮ່ວມກັນ. ພ້ອມກັນນັ້ນ, ກໍ່ຫັນເປັນທັນສະໄໝ ສໍາລັບການເຂົ້າເຖິງຂໍ້ມູນ ແລະ ການຕິດຕໍ່ພົວພັນວຽກງານກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍສະເພາະການນໍໃຊ້ ລະບົບ E-document ເພື່ອຄວາມສະດວກສະບາຍໃນເຂົ້າເຖິງຂໍ້ມູນ, ຫຼຸດຜ່ອນຂັ້ນຕອນ, ປະຢັດເວລາ ແລະ ເພີ່ມປະສິດທິພາບໃຫ້ແກ່ພາກລັດໃນການຄຸ້ມຄອງຕົວເມືອງ.

ຂອບໃຈຫຼາຍໆ🙂

# Urban Development TIPS

In this section you will find information about the laws and institutions on urban development, as well as urban development initiatives.

The theme of this issue is Construction Permit.

## Creating a safe and beautiful city

A construction permit is a basic rule that prevents any construction that do not conform with the law and help ensure in and create safe and beautiful cities. Should you want to build a new building or structure, extend or renovate a building, you must submit the necessary documents to the DPWT or OPWT for a construction permit before you begin a construction. Once the construction permit is granted, work can begin. This procedure has been introduced following the revision of Decision on Construction Management in 2019.

### ◆When？

The construction permit is applied before beginning a construction, the types of construction works are as follows:

1. Construction of new objects (buildings) and installation of structures;
2. Building extension and changes of its functional uses;
3. Renovation and Restoration of buildings;
4. Demolition and Repair of buildings or construction objects.

### ◆Where？

Go to 'One Stop Service' of PWT Sector for consultation and application which depends on the size and characteristics.

| Level | Type |
|---|---|
| Level 1 To DPWT | Large buildings<br>Total Floor Area: more than 10,000 $m^2$,<br>or Height: Over 20 m |
| Level 2 To DPWT | Medium buildings<br>Total Floor Area: 400- 10,000 $m^2$,<br>or Height: 10-20m |
| Level 3 To OPWT | Small buildings<br>Total Floor Area: less than 400 $m^2$,<br>or Height: less than 10m |




Source: JICA based on Brochure for Building Permission (Lao language)

### ◆Why？

A construction permit will be checked/ reviewed whether a building or structure conforms to the urban plan (use, height, etc.). In order to ensure that the citizens live in a safe and comfortable environment, it is necessary to take into account a variety of factors, such as the balance of development, the state of infrastructure, namely roads and water supply, and greenery.


**Contact Us:** DPWT, VTE Tel: 021 260 206

**Application:** https://vientianecity.gov.la


*You can read the electronic version here* →


Edited and published by Urban Management Platform Secretariat ump.secretariat.laos@gmail.com



UMP NEWSLETTER


# Ban Hao


**The First Issue / February, 2022**


## What is 'Ban Hao'？

Ban Hao provides information on urban development in Vientiane and beyond. The newsletter is not only for professionals in the field of architecture and urban planning, but also for anyone who is interested in urban development.



New Year Patuxay photo by Yama

## News The launch of UMP, Urban Management Platform connecting various actors in urban development

The Urban Management Platform (UMP) is a mechanism to discuss and share information on urban development policies and issues, not only with the public sector but also with other stakeholders such as citizens, private sector and institutions. It also actively organizes seminars and ICT-based information sharing activities.



1st UMP meeting

UMP is led by MPWT with the cooperation of various departments including Vientiane Capital, MoF, MPI and DONRE and is administrated by the Working Groups on JICA project for "Capacity Development on Urban Development Control and Promotion". The first UMP meeting was held on 2nd February. In the future there will be Open Seminars, to which the public will be invited.

## Interviews

Assoc. Prof. Aphisayadeth INSIXIENGMAY, Deputy Director of the Public Works and Transport Research and Institute, and Mr. Nalongxay MYVAPADITH, Deputy Director of Department of Housing and Urban Planning, were invited to talk about urban development in Vientiane.



Assoc. Prof. Aphisayadeth INSIXIENGMAY,

Deputy Director General / PTRI

Mr. Nalongxay MYVAPADITH,

Deputy Director General / DHUP



**◇Vientiane is a beautiful capital city with lots of greenery, how do you see the current urban development situation from an expert's point of view?**

Assoc. Prof. Aphisayadeth:

After the declaration of independence as the Lao People's Democratic Republic (PDR), Vientiane Capital has been developed in a comprehensive manner and grown steadily. The urban and suburb areas have been developed exponentially, with new landscape of the city becoming more visible.
However, Vientiane Capital is still being considered as "underdeveloped" in comparison to the capital cities of many other countries in terms of development level. In particular, Vientiane Capital has high public debt; urban transport infrastructure or public utilities that do not adequately meet the needs of citizens, coupled with a weak urban administration, poor city management, unrestricted urban control; housing construction is incompliant with urban planning and lacking congruence between the national architectural identity and the modern era.

**◇There are many different types of development in the urban, from large scale projects to smaller residences and events, how do you think they should be controlled and promoted?**

Mr. Nalongxay :

In Laos, a large number of development projects has emerged, ranging from large to small-scale projects, which are one of the crucial contributors to city development. This development should be controlled in accordance with the strategic development of the urban plan, urban law, and other relevant regulations. This is to ensure that urban development go hand in hand with the protection of environment, culture, history, unique architectural and artistic identity, while ensuring the beauty and sustainability of the landscape.
Urban development promotion should emphasize on a balanced integration of internal economic structure which is beneficial to the country and citizens with modern services, clean industry and green agriculture to become a modern city with Smart City standards from the beginning. This is to ensure citizens' benefits in order to improve their quality of lives; especially urban development projects that contribute to economic growth, create jobs, and build a livable and modern city.

**◇What kind of urban development do you expect in Vientiane in the future?**

Assoc. Prof. Aphisayadeth:

In the future, I expect Vientiane Capital to be transformed by creating new development area into a modern city with the standards of Smart City from the beginning; to improve the old urban communities that are still semi-urban and rural, to upgrade the development of each urban festivity, build villages in the suburbs into small livable communities, and implement the General Urban Planning volume III until 2030.

**◇Citizens and the private sector are also players in urban development, what role do they play in urban development?**

Mr.Nalongxay:

Any development projects should certainly involve citizens and private sectors' participation within the development area, where the government, citizens, and the private sectors work together as joint development planners. The private sectors play a role as implementers or investors for each priority project, while citizens play a role as cooperators. Urban development is one of the crucial contributors to the country's development which starts from small project "community projects". The collaborative development allows every stakeholder to collaboratively partake in the decision-making process on any activities that have impacts on their lives, and the community's involvement in the development will result in working connections between the government, private sectors, and citizens for sustainable development of the project.

**◇Last but not least, you both also chair the UMP. What kind of activities do you want to carry out in the future?**

Assoc. Prof. Aphisayadeth:

The activities to be carried out in the future is to develop Vientiane Capital to become a livable, sustainable, and Smart City in faster pace, practically implement General Urban Plan Volume III and Specific Urban Plan for each zone and each road, place emphasis on the development of the central area to become outstanding, and reorganize village landscape in each district to be more appropriate.

Mr.Nalongxay:

The UMP activities to be focused on in the future involve coordination between the central and local levels regarding the implementation in each phase to monitor, inspect, and evaluate the implemented activities as a reference for urban management and development planning. This is to exchange knowledge on urban management issues with the local authorities and other relevant organizations, disseminate urban management and development information, and find solutions to urban issues. At the same time, information accessibility should be modernized through an advanced system to facilitate coordination with relevant authorities, especially by using an E-document system to make it easier to access information, deduct the procedures, and save time. This will effectively help facilitate the government dealing with urban management.

Thank you very much😊